## ຣາຍລະອຽດການຕິດຕໍ່ຂອງ ສູນບໍຣິການອະນາມັຍສໍາລັບເດັກ ແລະຄອບຄົວ

StEPs
Statewide Eyesight Preschooler Screening

SHPN (NKF) 130151 - Lao

# StEPs

# ການກວດສາຍຕາເດັກວັຍ ກ່ອນເຂົ້າຮຽນທົ່ວຣັດ

Statewide Eyesight Preschooler Screening



## ສິ່ງທີ່ທ່ານຕ້ອງຮູ້ກ່ຽວກັບໂຄງການ StEPS

NSW GOVERNMENT | Health

## StEPS ແມ່ນຫຍັງ?

ໂຄງການ StEPS ເປັນຄວາມຄິດລິເລີ້ມຂອງກະຊວງສາທາຣະນະສຸກ ຣັດ NSW ແລະສເນີໃຫ້ມີການກວດປະເມີນສາຍຕາຟຣີແກ່ເດັກທີ່ມີອາຍຸ4ປີ ໝົດທຸກຄົນ.

## ເປັນຫຍັງລູກຂ້ອຍຈຶ່ງຕ້ອງມີການກວດສາຍຕາແບບກັ່ນກອງ?

- ໜ້ອຍທີ່ສຸດທີ່ພວກເດັກນ້ອຍຈະຈົ່ມວ່າມີບັນຫາທາງຕາ
- ພວກເດັກນ້ອຍອາດຈະບໍ່ຮູ້ຕົວວ່າຕົນເອງບໍ່ສາມາດເບິ່ງໄດ້ຊັດແຈ້ງດີ
- ເດັກນ້ອຍອາດຈະສາມາດເບິ່ງເຫັນໄດ້ດີດ້ວຍຕາຂ້າງນຶ່ງ ແຕ່ອີກຂ້າງນຶ່ງມີສາຍຕາບໍ່ດີ.
- ຕາຂອງເດັກນ້ອຍອາດຈະເບິ່ງ ພໍເຫັນໄດ້ ແລະ ພໍ່ແມ່/ຜູ້ດູແລອາດຈະຄິດວ່າລູກຂອງພວກເຂົາສາມາດເບິ່ງເຫັນໄດ້ດີ ແຕ່ວ່າເດັກນ້ອຍບາງຄົນອາດຈະຍັງມີບັນຫາດ້ານສາຍຕາຢູ່.
- ທາງດຽວທີ່ຈະສາມາດບອກໄດ້ວ່າເດັກມີບັນຫາດ້ານສາຍ ຕາກໍຄືພາເດັກໄປກວດຕາເທື່ອລະຂ້າງ.



## ທ່ານເຄີຍຮູ້ບໍ່ວ່າ?

- ຖ້າເດັກມີ 'ຕາເຫຼ່ວ' ມັນກໍອາດຈະນໍາໄປສູ່ການສູນເສັຍສາຍຕາຢ່າງຮ້າຍແຮງ ຫຼື ຕາບອດໃນຕາຂ້າງນັ້ນຖ້າຫາກ ວ່າບໍ່ໄດ້ຮັບການຮັກສາ.
- ຖ້າວ່າເດັກຫາກມີບັນຫາດ້ານສາຍຕາ, ການກວດພົບບັນຫານັ້ນແລະມີການຮັກສາໄວເທົ່າໃດຍິ່ງເປັນການດີຕໍ່ຜົນຮັບຂອງສາຍຕາ.
- ຖ້າພໍ່ແມ່ໃສ່ແວ່ນຕາຫຼືເຄີຍມີບັນຫາດ້ານສາຍຕາຕັ້ງແຕ່ຍັງເປັນເດັກນ້ອຍ ກໍມີແນວໂນ້ມວ່າລູກຂອງພວກເຂົາຈະມີບັນຫາດ້ານສາຍຕາເຊັ່ນກັນ.
- ຫຼັງຈາກທີ່ມີອາຍຸໄດ້ຮອດແປດປີ ແລ້ວ ບັນຫາດ້ານສາຍຕາບາງຢ່າງ ໃນວັຍເດັກບໍ່ສາມາດຖືກຮັກສາໄດ້ ແລະ ເດັກນ້ອຍກໍຈະມີສາຍຕາບໍ່ດີໄປຕລອດຊີວິດຂອງພວກເຂົາ - ແວ່ນຕາກໍບໍ່ສາມາດຊ່ວຍໄດ້.
- ເດັກທີ່ເກີດໃໝ່ແລະມີນໍ້າໜັກໜ້ອຍ ແລະ ເດັກທີ່ມີບັນຫາກ່ຽວກັບເສັ້ນປະສາດແມ່ນມີຄວາມສ່ຽງສູງໃນການເກີດບັນຫາດ້ານສາຍຕາ.

## ລູກຂ້ອຍຕ້ອງທໍາການກວດສາຍຕາແບບກັ່ນກອງບໍ່?

ກະຊວງສາທາຣະນະສຸກ ຣັດ NSW ແນະນໍາໃຫ້ເດັກໝົດທຸກຄົນກວດສາຍຕາກ່ອນທີ່ພວກເຂົາຈະເລີ້ມເຂົ້າໂຮງຮຽນ ແລະ ແນະນໍາຢ່າງໜັກແໜ້ນວ່າເດັກທີ່ມີອາຍຸ4ປີໝົດທຸກຄົນຄວນ ເຂົ້າຮ່ວມໃນໂຄງການກວດສາຍຕາແບບກັ່ນກອງນີ້.

## ລູກຂ້ອຍຈະເຂົ້າຮ່ວມ ໂຄງການ StEPS ໄດ້ຢ່າງໃດ?

ພາກເຂດສາທາຣະນະສຸຂໃນທ້ອງຖິ່ນຂອງທ່ານຈະແນໃສ່ສູນຮຽນຕຽມເຂົ້າໂຮງຮຽນ ແລະ ສູນດູແລເດັກເພື່ອສເນີໃຫ້ມີການກວດສາຍຕາ**ຟຣີ**ແກ່ເດັກທີ່ມີອາຍຸສີ່ປີໝົດທຸກຄົນ. ເພື່ອຈະໃຫ້ລູກທ່ານໄດ້ຮັບການກວດສາຍຕາ ທ່ານຈະຕ້ອງຂຽນຕື່ມຟອມຍິນຍອມ ແລະ ສົ່ງຄືນໄປໃຫ້ໂຮງຮຽນຕຽມອະນຸບານ /ສູນດູແລເດັກຂອງລູກທ່ານ.

ນອກຈາກນີ້ ທ່ານຍັງສາມາດພາລູກທີ່ມີອາຍຸສີ່ປີຂອງທ່ານໄປກວດສາຍຕາ**ຟຣີ** ໄດ້ທີ່ສູນບໍຣິການອະນາມັຍສໍາລັບເດັກແລະຄອບຄົວໃນທ້ອງຖິ່ນຂອງທ່ານ. ຣາຍລະອຽດການຕິດຕໍ່ຂອງ ສູນບໍຣິການອະນາມັຍສໍາລັບເດັກແລະຄອບຄົວໃນທ້ອງຖິ່ນ ຂອງທ່ານແມ່ນມີຢູ່ໃນດ້ານຫຼັງຂອງເຈັ້ຍແຜ່ນນີ້.



## ຂ້ອຍຈະຮູ້ໄດ້ຢ່າງໃດວ່າລູກຂ້ອຍມີບັນຫາດານສາຍຕາ?

ພໍ່ແມ່/ຜູ້ດູແລຂອງເດັກທີ່ໄດ້ຮັບການກວດສາຍຕາແລ້ວຈະຖືກແຈ້ງໃຫ້ຊາບເຖິງຜົນຮັບຂອງການກວດປະເມີນສາຍຕາຂອງພວກເຂົາ. ຖ້າຫາກວ່າມີການກວດພົບວ່າມີບັນຫາດ້ານສາຍຕາ ທີ່ກໍຈະຖືກຕິດຕໍ່ຫາໂດຍຫ້ອງການສາທາຣະນະສຸກໃນເຂດຂອງທ່ານ ແລະ ຈະຖືກຂໍໃຫ້ທ່ານພາລູກໄປກວດສາຍຕາໃຫ້ລະອຽດໂດຍຜູ້ຊ່ຽວຊານດ້ານສາຍຕາ.

ຕາຂອງເດັກຈະສືບຕໍ່ພັທນາຈົນກວ່າອາຍຸຈະເຖິງ8ປີ ມັນເປັນ ສິ່ງສໍາຄັນທີ່ຕ້ອງໃຫ້ແນ່ໃຈວ່າສາຍຕາຂອງເດັກທຸກໆຄົນ ພັທນາຕາມປົກກະຕິຊ່ວງລະຍະປີທີ່ສາຍຕາພວມເຕີບໂຕນີ້.

ໂຄງການ StEPS ເປັນໂຄງການກວດສາຍຕາແບບກັ່ນກອງ ແລະ ບໍ່ໄດ້ໃຫ້ການກວດປະເມີນແບບລະອຽດ. ຖ້າທ່ານມີຄວາມກັງວົນໃດໆກ່ຽວກັບສາຍຕາຂອງລູກທ່ານ ຂໍແນະນໍາໃຫ້ທ່ານພາລູກໄປກວດສາຍຕາໃຫ້ລະອຽດໂດຍຜູ້ຊ່ຽວຊານດ້ານສາຍຕາ.